# ສອນອິສລາມຕາມແບບນະບີ

⭐ ລວມ 30 ຄຳຖາມສຳຫຼັບພໍ່ແມ່ ຄູ ໄວ້ສອນລູກໆ ກ່ຽວກັບຄວາມເຊື່ອເບື້ອງຕົ້ນ ຂອງສາສະໜາອິສລາມ

✍️ ຈົ່ງສອນອະກີດະຫ໌ໃຫ້ແກ່ລູກໆ ດ້ວຍການຖາມຄຳຖາມເຫຼົ່ານີ້ກັບພວກເຂົາບ່ອຍໆ

➢ 1. ອັລລໍຫ໌ຢູ່ໃສ ?

**ຕອບ:** ເທິງຊັ້ນຟ້າ (ເໜືອອະລັຊ)

➢ 2. ແມ່ນຍັງຄືຫຼັກຖານຈາກອັລ-ກຸຣອານທີ່ຢັ້ງຢືນວ່າປະທັບຢູ່ເໜືອອະລັສ

**ຕອບ:**ٱلرَّحۡمَٰنُ عَلَى ٱلۡعَرۡشِ ٱسۡتَوَىٰ

ຄວາມໝາຍ: ພຣະອົງຜູ້ຊົງກະລຸນາປານີ ຊົງເທິງບັນລັງ

➢ 3. ແມ່ນຍັງຄືຄວາມໝາຍຂອງຄຳວ່າ ٱسۡتَوَىٰ (ປະທັບ)

**ຕອບ:** ຢູ່ເໜືອ ຢູ່ເທິງ (ເປັນການຢູ່ເບື້ອງບົນຢ່າງແທ້ຈິງ ບໍ່ແມ່ນລັກສະນະປຽບເປີຍ)

➢ 4. ເຮົາເອົາຫຼັກຖານຄວາມເຊື່ອຂອງເຮົາມາຈາກໃສ?

**ຕອບ:** ຈາກອັລ-ກຸຣອານ ຊຸນນະຫ໌ ແລະ ຮ່ອງຮອຍຂອງຊາວສະລັຟ (ຄົນຮຸ່ນຫຼັງຈາກນະບີ 300 ປີ)

➢ 5. ຍ້ອນຍັງອັລລໍຫ໌ຈຶ່ງສ້າງ ຈິນ ແລະ ມະນຸດ?

**ຕອບ:** ເພື່ອເຄົາລົບສັກກາລະ (ອິບາດະຫ໌) ຕໍ່ພຣະອົງພຽງຜູ້ດຽວ ບໍ່ມີພາຄີໃດໆທຽງຄຽງພຣະອົງໃນການເຄົາລົບສັກກາລະ

➢ 6. ແມ່ນຍັງຄືຫຼັກຖານຈາກອັລກຸຣອານທີ່ຢືນຢັນວ່າອັລລໍຫ໌ຊົງສ້າງຈິນແລະມະນຸດມາເພື່ອເຄົາລົບສັກກາລະຕໍ່ພຣະອົງ?

**ຕອບ:** وَمَا خَلَقۡتُ ٱلۡجِنَّ وَٱلۡإِنسَ إِلَّا لِيَعۡبُدُونِ

ຄວາມໝາຍ: ແລະຂ້າບໍ່ໄດ້ສ້າງຈິນແລະມະນຸດມາເພື່ອອື່ນໃດ ເວັ້ນແຕ່ເພື່ອເຄົາລົບສັກກາລະຕໍ່ຂ້າ (ອັຊຊາຣິຍາຕ : 56)

➢ 7. ແມ່ນຍັງຄືຄວາມໝາຍຂອງຄຳວ່າ "ເພື່ອເຄົາລົບສັກກາລະຕໍ່ຂ້າ" (يعبدون) ?

**ຕອບ:** ໃຫ້ເອກະພາບຕໍ່ຂ້າ (ອັລລໍຫ໌) ເຊື່ອຟັງອັລລໍຫ໌

- 8. ແມ່ນຍັງຄືຄວາມໝາຍຄໍາວ່າ "ລາອິລາຮະ ອິລລັລລໍຫ໌" ?

**ຕອບ:** ບໍ່ມີພຣະເຈົ້າອື່ນໃດ ທີ່ຖືກເຄົາລົບພັກດີຢ່າງທ່ຽງແທ້ນອກຈາກອັລລໍຫ໌

- 9. ແມ່ນຍັງຄືການເຄົາລົບສັກກາລະທີ່ຍິ່ງໃຫຍ່ທີ່ສຸດ?

**ຕອບ:** ອັດເຕົາຮີດ (ການໃຫ້ເອກະພາບຕໍ່ອັລລໍຫ໌)

- 10. ແມ່ນຍັງຄືການອະທໍາທີ່ຮ້າຍແຮງທີ່ສຸດ ?

**ຕອບ:** ຊີຣິກ (ການຕັ້ງພາຄີຕໍ່ອັລລໍຫ໌)

- 11. ແມ່ນຍັງຄື "ເຕົາຮີດ"?

**ຕອບ:** ການໃຫ້ອັລລໍຫ໌ເປັນໜຶ່ງໃນການເຄົາລົບສັກກາລະ

- 12. ແມ່ນຍັງຄື "ຊີຣິກ"

**ຕອບ:** ເຄົາລົບເຊື່ອສິ່ງອື່ນຄວບຄູ່ກັບອັລລໍຫ໌

- 13. ເຕົາຮີດມີຈັກຊະນິດ?

**ຕອບ:** ສາມ ຊະນິດ

- 14. ເຕົາຮີດທັງສາມ ມີຍັງແດ່ ?

**ຕອບ:** 1. ເຕົາຮີດຣູບູບີຍະຫ໌ 2. ເຕົາຮີດອູລູຮີຍະຫ໌ 3. ເຕົາຮີດອັສມາ ວັສຊີຟາຕ

- 15. ແມ່ນຍັງຄື ຄວາມໝາຍຂອງ "ເຕົາຮີດ ຣູບູບີຍະຫ໌"?

**ຕອບ:** ການໃຫ້ເອກະພາບຕໍ່ອັລລໍຫ໌ໃນການກະທໍາຕ່າງໆຂອງພຣະອົງ ເຊັ່ນ ການສ້າງ ການປະທານປັດໃຈຢັງຊີບ ການບໍລິຫານຈັດການ

- 16. ແມ່ນຍັງຄື ຄວາມໝາຍຂອງ "ເຕົາຮີດ ອູລູຮີຍະຫ໌"

**ຕອບ:** ການໃຫ້ເອກະພາບຕໍ່ອັລລໍຫ໌ດ້ວຍການກະທໍາຕ່າງຂອງບ່າວຜູ້ສັດທາ ເຊັ່ນ ການລະຫມາດ ການຂໍດຸອາ ການຂ້າສັດເພື່ອອັລລໍຫ໌

- 17. ອັລລໍຫ໌ຊົງມີພຣະນາມແລະຄຸນນະລັກສະນະຫຼືບໍ່?

**ຕອບ:** ແມ່ນແລ້ວ ອັລລໍຫ໌ຊົງມີພຣະນາມອັນມ່ວນ ແລະຄຸນນະລັກສະນະຕາມທີ່ພຣະອົງໄດ້ໃຫ້ພຣະອົງເອງ ແລະ ຕາມທີ່ນະບີ ຂອງພຣະອົງໄດ້ບອກເຖິງຄຸນນະລັກສະນະຂອງພຣະອົງເອົາໄວ້

- 18. ພຣະນາມຂອງອັລລໍຫ໌ມີຢູ່ເທົ່າໃດ? ເຮົາເອົາພຣະນາມແລະຄຸນນະລັກສະນະຂອງອັລລໍຫ໌ມາຈາກໃສ?

**ຕອບ:** ມີຢູ່ 99 ພຣະນາມ, ເຮົາເອົາມາຈາກອັລກຸຣອານ ແລະ ຊຸນນະຫ໌

- 19. ຄຸນນະລັກສະນະຂອງອັລລໍຫ໌ເໝືອນດັ່ງຄຸນນະລັກສະນະຂອງສິ່ງທີ່ຖືກສ້າງຫຼືບໍ່?

**ຕອບ:** ຄຸນນະລັກສະນະຕ່າງໆ ຂອງອັລລໍຫ໌ ບໍ່ເໝືອນຄຸນນະລັກສະນະຂອງສິ່ງທີ່ຖືກສ້າງ ໃນແກ່ນແທ້ຂອງມັນ (ເຖິງແມ້ວ່າບາງຄັ້ງຊື່ເອີ້ນຈະເໝືອນກັນກໍ່ຕາມ ເຊັ່ນ ເຮົາເອີ້ນວ່າມືຄືກັນ ແຕ່ສະພາບທີ່ແທ້ຈິ່ງລະຫວ່າງມືມະນຸດກັບມືຂອງອັລລໍຫ໌ຈະແຕກຕ່າງກັນ)

- 20. ແມ່ນຍັງຄື ຫຼັກຖານຈາກອັລກຸຣອານທີ່ຢືນຢັນວ່າຄຸນນະລັກສະນະຂອງອັລລໍຫ໌ບໍ່ເໝືອນຄຸນນະລັກສະນະຂອງສິ່ງທີ່ຖືກສ້າງ?

**ຕອບ:** لَيْسَ كَمِثْلِهِۦ شَىْءٌ ۖ وَهُوَ ٱلسَّمِيعُ ٱلْبَصِيرُ

ຄວາມໝາຍ: ບໍ່ມີສິ່ງໃດສະເໝີເໝືອນພຣະອົງ ແລະ ພຣະອົງເປັນຜູ້ຊົງໄດ້ຍິນ ແລະຊົງເຫັນ (ອັຊຊູຣໍ: 11)

- 21. ອັລກຸຣອານ ຄືອະໄລ?

**ຕອບ:** ອັລກຸຣອານ ຄື ຄຳເວົ້າຂອງອັລລໍຫ໌

- 22. ອັລກຸຣອານຖືກປະທານລົງມາ ຫຼື ຖືກສ້າງ?

**ຕອບ:** ອັລກຸຣອານຖືກປະທານລົງມາ ເຊິ່ງເປັນຄຳເວົ້າຂອງອັລລໍຫ໌ຢ່າງແທ້ຈິ່ງ (ດ້ວຍອັກສອນ ແລະສຽງ)

- 23. ແມ່ນຍັງຄືການຟື້ນຄືນຊີບ?

**ຕອບ:** ຄື ການໃຫ້ມະນຸດກັບມາມີຊີວິດຫຼັງຈາກທີ່ພວກເຂົາໄດ້ເສຍຊີວິດໄປແລ້ວ

- 24. ແມ່ນຍັງຄືຫຼັກຖານຈາກອັລກຸຣອານທີ່ຢືນຢັນວ່າຜູ້ປະຕິເສດການຟື້ນຄືນຊີບເປັນກາຟີຣ (ຜູ້ປະຕິເສດສັດທາ)?

**ຕອບ:** زَعَمَ ٱلَّذِينَ كَفَرُوٓا۟ أَن لَّن يُبْعَثُوا۟

ຄວາມໝາຍ: ບັນດາຜູ້ປະຕິເສດສັດທາກ່າວອ້າງວ່າພວກເຂົາຈະບໍ່ຖືກຟື້ນຄືນຊີບຂຶ້ນມາອີກ (ອັຕຕະກໍ່ບຸນ 7)

- 25. ແມ່ນຍັງຄືຫຼັກຖານຈາກອັລກຸຣອານວ່າເຮົາຈະຕ້ອງຟື້ນຄືນຊີບອີກຄັ້ງ?

**ຕອບ:** قُلْ بَلَىٰ وَرَبِّى لَتُبْعَثُنَّ

ຄວາມໝາຍ: ຈົ່ງກ່າວທ່ອນ (ມູຮຳຫມັດ) ຫາເປັນເຊັ່ນນັ້ນບໍ່ ! ຂໍສາບານຕໍ່ພຣະອົງອັລລໍຫ໌ ພວກທ່ານຈະຖືກຟື້ນຄືນຊີບຂຶ້ນມາອີກຢ່າງແນ່ນອນ (ອັຕຕະກໍ່ບຸນ 7)

- 26. ແມ່ນຍັງຄື ຄວາມໝາຍຂອງຄຳວ່າ "ອິສລາມ"

**ຕອບ:** ຄືການຍອມຈຳນົນຕໍ່ອັລລໍຫ໌ດ້ວຍການໃຫ້ເອກະພາບຕໍ່ພຣະອົງ ແລະປະຕິບັດຕາມບັນຊາຂອງພຣະອົງຕະຫຼອດຈົນການບໍລິສຸດຈາກການຕັ້ງພາຄີແລະບັນດາຜູ້ຕັ້ງພາຄີຕໍ່ອັລລໍຫ໌

- 27. ແມ່ນຍັງຄືຄວາມໝາຍຂອງຄຳວ່າ "ອີມານ"

**ຕອບ:** ຄືການສັດທາຕໍ່ອັລລໍຫ໌ ແລະບັນດາມະລາອິກະຫ໌ຂອງພຣະອົງ ແລະບັນດາຄຳພີຂອງພຣະອົງ ແລະບັນດານະບີຂອງພຣະອົງ ແລະວັນອະຄິເຣາະຫ໌(ວັນສິ້ນໂລກ) ແລະສັດທາຕໍ່ການກຳໜົດສະພາວະການທັ້ງດີແລະຊົ່ວ

- 28. ການອີມານຈະເກີດຂຶ້ນດ້ວຍຫົວໃຈ ຫຼື ຄຳເວົ້າ ຫຼື ຮ່າງກາຍ?

**ຕອບ:** ການອີມານ ຈະເກີດຂຶ້ນດ້ວຍການເຊື່ອຂອງຫົວໃຈ ແລະວາຈາຂອງລີ້ນ ແລະການປະຕິບັດຂອງຮ່າງກາຍ ຄວບຄູ່ກັນໄປແລະມັນເພີ່ມຂຶ້ນດ້ວຍການເຊື່ອຟັງ ແລະລົດລົງດ້ວຍການຝ່າຝືນ (ຈົ່ງລະວັງຄຳເວົ້າທີ່ວ່າ : ອີມານເປັນເລື່ອງຂອງຫົວໃຈພຽງຢ່າງດຽວ)

- 29. ເຮົາຈະນອບນ້ອມ ສຸຈູດ ແລະຂ້າສັດເພື່ອຜູ້ໃດ?

**ຕອບ:** ເພື່ອອັລລໍຫ໌ພຽງຜູ້ດຽວ ບໍ່ມີພາຄີໃດໆມາທຽບຄຽງພຣະອົງ

- ອະນຸຍາດຫຼືບໍ່ທີ່ຈະນອບນ້ອມ ສຸຈູດ (ກົ້ມກາບ) ແລະຂ້າສັດເພື່ອຜູ້ອື່ນນອກຈາກອັລລໍຫ໌

**ຕອບ:** ບໍ່ອະນຸຍາດ, ເພາະການກະທຳສິ່ງດັ່ງກ່າວເພື່ອສິ່ງອື່ນນອກຈາກອັລລໍຫ໌ນັ້ນ ເປັນການຕັ້ງພາຄີ (ຊີຣິກ)


ແປຈາກ: ອິສລາມຕົ້ນແບບ

ອາຈານ: ມູຮຳໝັດ ນູຮ ອຸດົມສຳພັນ

020 780 99 094

Noorsolih@gmail.com